This documet contains
RealAudio® files

# ຮຽນ ພາສາລາວ ນຳ ກັນ

**L E T ' S  S T U D Y  L A O  2**

Go to> Pronunciations & Meanings[Japanese | English]

Recorded by Vilip at 1994 in Beijing

## ຫົງຫາມເຕົ່າ

RealAudio
[01]50KB

ແຕ່ຄາວກ່ອນ,ມີຫົງສອງຜົວເມຍ,ຫາກິນຢູ່ໃນໜອງນ້ອຍແຫ່ງໜຶ່ງ ໃນໜອງນັ້ນກໍ່ມີເຕົ່າອີກຕົວໜຶ່ງອາໄສກິນຢູ່ຫັ້ນເໝືອນກັນ, ຫົງກັບເຕົ່າ ໄດ້ພົບພໍ້ກັນຢູ່ສະເໝີ,ຈົນລຶ້ງເຄີຍ ແລະ ຮັກແພງກັນ.

RealAudio
[02]25KB

ປີໜຶ່ງຟ້າຝົນແລ້ງ,ນ້ຳໃນໜອງກໍ່ບົກຂາດແຫ້ງ,ດັ່ງນັ້ນ, ຫົງສອງ ຜົວເມຍຈຶ່ງປຶກສາຫາລືກັບເຕົ່າວ່າ.

RealAudio
[03]35KB

RealAudio
[04]50KB

ເພື່ອນເອີຍ ! ນ້ຳໃນໜອງນີ້ກໍ່ບົກແຫ້ງໝົດແລ້ວ,ຫາແນວຈະກິນກໍ່ບໍ່ມີ, ພວກເຮົາຊິພາກັນເຝົ້າໜອງອັນເປົ່າແປນເຮັດຫຍັງ, ຂືນຢູ່ຕໍ່ໄປກໍ່ອຶດຕາຍແທ້. ພວກເຮົາເຫັນວ່າ, ຄວນຍ້າຍໄປຫາກິນຢູ່ໜອງໃຫຍ່ໆທີ່ມີນ້ຳໃສສະອາດ,ແລະມີອາຫານອຸດົມສົມບູນດີກວ່າຫຼືເພື່ອນມີຄວາມຄິດເຫັນຢ່າງໃດ?

ເຕົ່າຕອບວ່າ : ກໍ່ດີເລ້ວ,ແຕ່ເຮົາບໍ່ຮູ້ວ່າໜອງອັນອຸດົມສົມບູນນັ້ນຢູ່ໃສ?

RealAudio [05]46KB

ຫົງຈຶ່ງເວົ້າວ່າ : ເລື່ອງໜອງນັ້ນພວກເຮົາໄດ້ໄປເຫັນມາແລ້ວ, ຖ້າຈະແລ້ງອີກດົນນານ,ນ້ຳໜອງກໍ່ຄືຊິບໍ່ແຫ້ງ,ອາຫານການກິນ,ປູ, ປາ, ກຸ້ງ, ຫອຍ, ບໍ່ອຶດ, ຕິແຕ່ຢູ່ໄກ ແລະ ໄປນານຮອດແດ່ທີ່ນັ້ນແລ້ວ.

RealAudio [06]60KB

- ເພື່ອນທັງສອງມີປີກມີຫາງຈະໄປຢູ່ໃສ, ໃກ້ໄກປານໃດກໍ່ບໍ່ຍາກ,ບິນໄປບຶດດຽວກໍ່ຮອດ. ສ່ວນເຮົານີ້ຈະໄປນຳໝູ່ໄດ້ຈັ່ງໃດ, ຂາກໍ່ສັ້ນໆ,ຍ່າງພໍ່ງຸບໆງັບໆ,ປາກໃດຊິຮອດຈັກເທື່ອ,ຢ້ານແຕ່ຕາຍກາງທາງກ່ອນທີ່ນັ້ນແລ້ວ.

RealAudio [07]41KB

- ຖ້າເພື່ອນຢາກໄປພວກເຮົາກໍ່ຊິຫາວິທີເອົາເພື່ອນໄປນຳຈົນໄດ້,ຂໍແຕ່ເພື່ອນເຮັດຕາມຄຳແນະນຳຂອງພວກເຮົາທີ່ນັ້ນແຫຼະ.

- ພວກໂຕຊິໃຫ້ເຮົາເຮັດຢ່າງໃດ? ລອງວ່າມາເບິ່ງດຸ?

RealAudio [08]42KB

– ພວກເຮົາທັງສອງຈະຄາບສົ້ນໄມ້ຄົນລະສົ້ນ,ໃຫ້ໂຕຄາບທາງກາງແລ້ວພວກເຮົາກໍ່ຈະຫາມໂຕບິນໄປ, ແຕ່ຕ້ອງລະວັງສົບ ລະວັງປາກໃຫ້ດີໆ, ເວລາພວກເຮົາຫາມໄປເທິງອາກາດ,ໂຕຢ່າເວົ້າຈາແນວໃດເປັນອັນຂາດ,ເຖິງຈະມີຜູ້ທັກທ້ວງໄຕ່ຖາມແນວໃດກໍ່ຢ່າຟ້າວອ້າປາກເວົ້າ.ຖ້າໂຕເຮັດໄດ້ຕາມຄວາມແນະນຳນີ້, ໂຕກໍ່ຈະໄດ້ໄປເຖິງບ່ອນຢູ່ໃໝ່ນຳພວກເຮົາຢ່າງສະບາຍ.

RealAudio [09]48KB

RealAudio [10]41KB

ເຕົ່າຕອບວ່າ, ຄັນຊັ້ນກໍ່ດີແລ້ວເດ! ເຮົາຍິນດີເຮັດຕາມຄວາມແນະນຳຂອງເພື່ອນທຸກຢ່າງ, ແຕ່ວ່າພວກເພື່ອນພາເຮົາໄປໃຫ້ມົ້ນຈາກໜອງອຶດຢາກໜອງນີ້ເທາະ.



from "4th year Language Textbooks of Elementary School"

RealAudio [11]52KB

ເມື່ອຕົກລົງກັນແລ້ວ,ຫົງທັງສອງກໍ່ຄາບສົ້ນໄມ້ຄົນລະສົ້ນ, ໃຫ້ເຕົ່າຄາບທາງກາງແລ້ວກໍ່ຫາມເຕົ່າບິນໄປ.ພໍໄປເຖິງໝູ່ບ້ານແຫ່ງໜຶ່ງ ຊາວບ້ານຫຼຽວເຫັນຈຶ່ງພາກັນແຫງນໜ້າຂຶ້ນເບິ່ງ ແລະ ພາກັນຫ້ອງແຊວໆວ່າ : ຫົງຫາມເຕົ່າ ! ຫົງຫາມເຕົ່າ ! ເຕົ່າໄດ້ຍິນ ກໍ່ຄຶດ

RealAudio [12]60KB

ອວດດີຢາກປະກາດໃຫ້ຄົນທັງຫຼາຍຮູ້ວ່າ, ມັນບໍ່ແມ່ນຫົງຫາມເຕົ່າ, ຂ້ອຍແມ່ນເຕົ່າວິເສດຫາບຫົງບິນຕ່າງຫາກ. ຄຶດແລ້ວເຕົ່າກໍ່ອ້າປາກຂຶ້ນຈະເວົ້າ,ປາກເລີຍຫຼຸດຈາກໄມ້ຄານຫາມຕົກລົງມາຖືກພະລານຫີນຕາຍຢູ່ກາງບ້ານ.

Lao Fonts on this file is “HONGKAD INTERNATIONAL FONTS”

Back to CONTENTS